## ເປັນຫຍັງຈຶ່ງປູກ ມູລາໂຕ II

ຫຍ້າມູລາໂຕ II ເປັນຫຍ້າອາຫານສັດເຂດຮ້ອນພັນໃໝ່ທີ່ມີຄຸນນະພາບດີ (ໂປຣຕີນ 14%) ໃຫ້ຜົນຜະລິດສູງ ແລະ ເປັນຫຍ້າທີ່ສາມາດປັບຕົວເຂົ້າກັບສະພາບແວດລ້ອມໄດ້ດີ

## ການເລືອກພື້ນທີ່ປູກ

ຄວນເລືອກທີ່ສູງ ບໍ່ມີນ້ຳຖ້ວມຂັງ, ດິນບໍ່ເປັນກົດຈັດ ຫລື ດິນເຄັມ.

## ຊ່ວງເວລາປູກ

ຊ່ວງເວລາປູກທີ່ເໝາະສົມໃນລະຫວ່າງເດືອນພຶດສະພາ ຫາ ເດືອນມິຖຸນາ.

## ການປູກ

ກຽມພື້ນທີ່ໂດຍການໄຖດິນຕາກ 3 ອາທິດ ແລ້ວໄຖພວນດິນອີກ ເພື່ອກຳຈັດວັດສະພືດ ຈາກນັ້ນ 1 ອາທິດ ຄາດດິນແຕກມຸ່ນ ແລະ ຮາບພຽງດີ ເພື່ອເໝາະໃນການ ຝັງຕົວຂອງເມັດພັນ, ໃສ່ປຸ໋ຍສູດ 15-15-15 ໃນອັດຕາ 50 ກລ/ໄຣ່ ($1,600 ມ^2$) ເປັນປຸ໋ຍຮອງພື້ນ ຫລື ອາດປະສົມ ກັບຝຸ່ນຄອກເພື່ອເພີ່ມອິນຊີວັດຖຸໃນດິນ.



- ຖ້າປູກເພື່ອລ້ຽງສັດ ຢອດເມັດ ຫລຸມລະ 5-6 ເມັດ ໄລຍະຫ່າງ 70x70 ຊມ.
- ຖ້າປູກເພື່ອເກັບເມັດພັນ ຢອດເມັດ ຫລຸມລະ 5-6 ເມັດ ໄລຍະຫ່າງ ລະຫວ່າງຫລຸມ 80 ຊມ., ລະຫວ່າງແຖວ 100 ຊມ.

## ການກຳຈັດວັດສະພືດ

ກຳຈັດວັດສະພືດຫລັງຈາກປູກຫຍ້າແລ້ວ 3-4 ອາທິດ ແລະ ຄັ້ງຕໍ່ໆ ໄປຕາມຄວາມຈຳເປັນ.

## ການນຳໃຊ້ປະໂຫຍດ

ເລີ່ມຕັດໃຫ້ສັດກິນເທື່ອທຳອິດເມື່ອຫຍ້າມີອາຍຸ ປະມານ 45-50 ວັນ ຫລັງຈາກປູກ ແລະ ຕັດເທື່ອຕໍ່ໄປທຸກໆ 35-40 ວັນ ໂດຍຕັດສູງຈາກໜ້າດິນ ປະມານ 10-12 ຊມ. ແລ້ວໃສ່ປຸ໋ຍຢູເຣຍ (46-0-0) ອັດຕາ 10 ກິໂລ/ໄຣ່ ຫລັງຈາກຕັດທຸກຄັ້ງ. ຖ້າປູກໃນພື້ນທີ່ ທີ່ອາໄສນ້ຳຝົນຢ່າງດຽວຈະໃຫ້ຜົນຜະລິດນ້ຳໜັກຫຍ້າ ສົດ 6-8 ໂຕນ/ໄຣ່/ປີ.



*ການຕັດຫຍ້າລ້ຽງງົວ*

## ການຕັດປັບສະພາບເພື່ອເກັບເມັດພັນ

ເພື່ອເຮັດໃຫ້ຫຍ້າອອກດອກຢ່າງສະໝ່ຳສະເໝີ ອາດຕັດຫຍ້າໃຫ້ສັດກິນກ່ອນ 1 ຮອບ ກ່ອນສິ້ນເດືອນກໍລະກົດ ເພາະຫຍ້າຕ້ອງການຊ່ວງເວລາໃນການຈະເລີນເຕີບໂຕກ່ອນອອກດອກໃນເດືອນ ຕຸລາ ປະມານ 106-124 ວັນ.

## ການເກັບກ່ຽວເມັດພັນ

ເມື່ອຫຍ້າອອກດອກ ຄວນກະກຽມການເກັບເມັດ ໂດຍໃຊ້ເຊືອກຟາງມັດຊໍ່ດອກເຂົ້າຫາກັນເພື່ອສະດວກໃນການເກັບ



*ມັດຊໍ່ດອກເພື່ອກະກຽມເກັບເມັດພັນ*

ເມັດຫຍ້າຈະເລີ່ມແກ່ຫລັງຈາກອອກດອກປະມານ 22-29 ວັນ ໃນໄລຍະນີ້ໃຫ້ໝັ່ນສັງເກດ ແລະ ເລີ່ມເກັບເມັດທັນທີເມື່ອ ເມັດແກ່ ໂດຍການເຄາະຮວງ ຄື: ເຄາະ 1 ເທື່ອແລ້ວເວັ້ນ 2 ມື້ ກັບມາເຄາະອີກເລື້ອຍໄປຈົນໝົດ.



*ການເກັບມັດພັນດ້ວຍການເຄາະຮວງເມັດ*

ເມັດພັນທີ່ໄດ້ໃຫ້ນຳໄປຕາກໃນບ່ອນຮົ່ມ 2 ວັນ ເພື່ອລຶດຄວາມຊຸ່ມ ແລ້ວນຳອອກມາຕາກແດດອີກ 1 ວັນ ການຕາກເມັດ ຄວນເຂ່ຍປີ້ນກັບເມັດເລື້ອຍ ໆ ເພື່ອໃຫ້ເມັດແຫ້ງຢ່າງສະໝ່ຳສະເໝີ ຫລັງຈາກນັ້ນ ທຳຄວາມສະອາດໂດຍການໃຊ້ກະດົ້ງຝັດສິ່ງເຈືອປົນອອກໄປ.



*ການຕາກເມັດພັນ*

ຜົນຜະລິດເມັດຈະໄດ້ປະມານ 40 ກລ/ໄຣ່ ຂຶ້ນຢູ່ກັບຄວາມອຸດົມສົມບູນຂອງດິນ, ການໃສ່ຝຸ່ນ ແລະ ການບົວລະບັດຮັກສາ.

## ການເກັບຮັກສາເມັດພັນ

ຄວນເກັບສາເມັດພັນໄວ້ໃນທີ່ຮົ່ມ ແລະ ແຫ້ງ ເມັດພັນຈະມີໄລຍະການພັກໂຕຫລັງຈາກເກັບກ່ຽວ ປະມານ 4 ເດືອນ ໝາຍຄວາມວ່າ ຖ້າຈະນຳເມັດພັນດັ່ງກ່າວໄປປູກ ຄວນໃຫ້ເມັດພັນໄດ້ພັກໂຕຫລັງເກັບກ່ຽວ 4 ເດືອນ ຈຶ່ງຈະໄດ້ຮັບຜົນດີ.



# ຄູ່ມື ການປູກ ແລະ ການຜະລິດ ເມັດພັນຫຍ້າ ມູລາໂຕ II

ມີນາ 2013



**ບໍລິສັດ ໄຟຟ້ານ້ຳເທີນ 2 ຈຳກັດ**
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ
ໜ່ວຍງານຟື້ນຟູຊີວິດການເປັນຢູ່